ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ
ຂາເຂົ້າ ເລກທີ...940....
ວັນທີ.10/3/17....

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ນາຍົກລັດຖະມົນຕີ

ເລກທີ:..95../ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.03. 2017

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016 ກ່ຽວກັບການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ;
- ອີງຕາມ ໜັງສືສະເໜີ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 35/ຖວທ, ລົງວັນທີ 13 ມັງກອນ 2017;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 47/ພນ, ລົງວັນທີ 20 ກຸມພາ 2017

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແນໃສ່ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂຽນເປັນຕົວອັກສອນຫຍໍ້ວ່າ: ຖວທ ແລະ ຂຽນເປັນພາສາຝຣັ່ງວ່າ: Ministère de l 'Information, de la Culture et du Tourisme ຂຽນເປັນຕົວອັກສອນຫຍໍ້ MICT, ແມ່ນກົງຈັກໜຶ່ງຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ

ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

**ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີໜ້າທີ່ ດັ່ງນີ້:**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ,ລັດຖະບັນຍັດຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປາກົດຜົນເປັນຈິງ;
3. ຄົ້ນຄວ້າສ້າງປັບປຸງ, ກົດໝາຍ ແລະ ນິຕິກຳຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
4. ຄົ້ນຄວ້າພິຈາລະນາອະນຸຍາດ, ສັ່ງໂຈະ ຫຼື ຍຸບເລີກ, ຍ້ອງຍໍ, ຕັກເຕືອນ ແລະ ປັບໃໝກິດຈະການທຸລະກິດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມກົດໝາຍ ແລະ ລະບຽບການກຳນົດ;
5. ສ້າງແຜນກຳນົດການພັດທະນາ, ກຳນົດມາດຕະຖານ, ເງື່ອນໄຂການສ້າງຕັ້ງ ຫຼື ຍົກເລີກຫົວໜ່ວຍການຈັດຕັ້ງທີ່ເຮັດວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ຄຸ້ມຄອງການອອກບັດນັກຂ່າວ ແລະ ການເຄື່ອນໄຫວຂອງສື່ມວນຊົນ ພ້ອມອະນຸຍາດການນຳເຂົ້າ-ສົ່ງອອກສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກເຂົ້າມາເຜີຍແຜ່ ແລະ ຈຳໜ່າຍຢູ່ ສປປ ລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
6. ເປັນກະບອກສຽງຂອງສູນກາງພັກ ແລະ ລັດຖະບານ ໃນການເຜີຍແຜ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ລະບຽບກົດໝາຍຂອງລັດ ຕໍ່ພາຍໃນ ແລະ ຕ່າງປະເທດ, ພ້ອມທັງສ່ອງແສງສະພາບຕົວຈິງໃນພາລະກິດການປົກປັກຮັກສາປະເທດຊາດ ແລະ ການພັດທະນາເສດຖະກິດ-ສັງຄົມໃນທົ່ວປະເທດ ຕະຫຼອດເຖິງຄວາມມຸ່ງມາດປາຖະໜາອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ;
7. ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຄຸ້ມຄອງການເຄື່ອນໄຫວຂອງນັກຂ່າວ, ສື່ມວນຊົນລາວ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ພາຍໃນ ສປປ ລາວ ພ້ອມທັງນັກຂ່າວລາວ ທີ່ໄປເຄື່ອນໄຫວຢູ່ຕ່າງປະເທດ;
8. ຕິດຕາມ, ກວດກາ ແລະ ປະເມີນຜົນການໂຄສະນາຖະແຫຼງຂ່າວ ຂອງສື່ມວນຊົນໃນແຕ່ລະໄລຍະ; ສັງລວມວິໄຈຂ່າວຂອງສື່ມວນຊົນຕ່າງປະເທດ ທີ່ອອກຂ່າວກ່ຽວກັບລາວເພື່ອສະໜອງຂໍ້ມູນໃຫ້ແກ່ລັດຖະບານຢ່າງທັນເວລາ;
9. ຄົ້ນຄວ້າ, ກຳນົດມາດຕະຖານເຕັກນິກ, ເຕັກໂນໂລຊີທີ່ກ້າວໜ້າທັນສະໄໝ ເຂົ້າໃນວຽກງານສື່ມວນຊົນຢ່າງເປັນເອກະພາບ ແລະ ເໝາະສົມກັບສະພາບຕົວຈິງຂອງປະເທດຊາດ ແລະ ຍຸກສະໄໝ;
10. ເກັບກຳ, ສຳເນົາ, ຄຸ້ມຄອງບັນດາສື່ສິ່ງພິມ, ສື່ເອເລັກໂຕຣນິກໃຫ້ເປັນລະບົບຄົບຊຸດ; ຄຸ້ມຄອງ ການນຳໃຊ້ພາຫະນະສື່ມວນຊົນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ມີປະສິດທິຜົນ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ;

11. ຈັດຕັ້ງປຸກລະດົມທົ່ວສັງຄົມ ເຂົ້າຮ່ວມຂະບວນການແຂ່ງຂັນປະດິດສ້າງ ແລະ ພັດທະນາວຽກງານສື່ມວນຊົນໃຫ້ກວ້າງຂວາງຕໍ່ເນື່ອງ.

12. ປົກປັກຮັກສາ, ຟື້ນຟູບູລະນະ, ພັດທະນາ, ນໍາໃຊ້ຄຸນຄ່າ ແລະ ໂຄສະນາເຜີຍແຜ່ ວັດທະນະທໍາແຫ່ງຊາດ, ມໍລະດົກທາງດ້ານວັດທະນະທໍາ ທີ່ເປັນຮູບປະທໍາ ແລະ ນາມມະທໍາຕໍ່ພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆ;

13. ປຸກລະດົມ, ຄຸ້ມຄອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມການສະແດງສິລະປະ, ງານມະໂຫລານສິລະປະລະດັບທ້ອງຖິ່ນ, ລະດັບຊາດ, ລະດັບສາກົນ ເພື່ອຮັບໃຊ້ໜ້າທີ່ການເມືອງ ແລະ ສ້າງບັນຍາກາດຕ້ອນຮັບວັນສໍາຄັນຕ່າງໆຂອງພັກ, ຂອງຊາດ, ຂອງສາກົນ ຢູ່ພາຍໃນ ແລະ ຕ່າງປະເທດ; ຄຸ້ມຄອງການປະດິດຄິດແຕ່ງເພງຮ້ອງ, ຂັບ, ລໍາ, ບົດຟ້ອນ, ດົນຕີ, ລະຄອນ ແລະ ກາຍຍະສິນ ເພື່ອສົ່ງເສີມໃຫ້ມະຫາຊົນເຂົ້າຮ່ວມ ຢ່າງກວ້າງຂວາງ ພ້ອມທັງຊຸກຍູ້ຢ່າງເປັນປົກກະຕິ;

14. ຄຸ້ມຄອງ, ຕິດຕາມ, ກວດກາ, ອະນຸມັດສ້າງຕັ້ງ, ສັ່ງໂຈະ, ຍົກເລີກໜ່ວຍງານຈັດຕັ້ງສິລະປິນ ແລະ ເນື້ອໃນລາຍການສະແດງ ຂອງໜ່ວຍງານຈັດຕັ້ງສິລະປິນ ທີ່ເຄື່ອນໄຫວປະກອບອາຊີບສິລະປິນ ເປັນຕົ້ນ: ເພງຮ້ອງ, ຂັບ, ລໍາ, ບົດຟ້ອນ, ດົນຕີ, ລະຄອນ ແລະ ອື່ນໆ ໃນຂອບເຂດທົ່ວປະເທດ; ຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສິລະປິນຂອງລາວ, ຂອງຕ່າງປະເທດທີ່ເຄື່ອນໄຫວຢູ່ພາຍໃນ ສປປ ລາວ ແລະ ສິລະປິນຂອງລາວໄປເຄື່ອນໄຫວຢູ່ຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

15. ຄຸ້ມຄອງ, ອະນຸຍາດ ຫຼື ຍົກເລີກການຜະລິດ, ການຈໍາໜ່າຍ ແລະ ການນໍາເຂົ້າ-ສົ່ງອອກ ກ່ຽວກັບຜະລິດຕະພັນສິລະປະ ເຊັ່ນ: ກະແຊັດ, ແຜ່ນສຽງ, ຊີດີ, ວີຊີດີ, ດີວີດີ, ຮູບພາບ... ຢ່າງມີການເລືອກເຟັ້ນ ແລະ ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ;

16. ຄົ້ນຄວ້າ ກໍານົດມາດຕະຖານ ກ່ຽວກັບວຽກງານວັດທະນະທໍາມະຫາຊົນ ເຊັ່ນ: ການສ້າງຄອບຄົວ, ບ້ານວັດທະນະທໍາ, ກົມກອງ, ສໍານັກງານ, ອົງການວັດທະນະທໍາ, ການເຄື່ອນໄຫວສະໂມສອນວັດທະນະທໍາ, ສູນວັດທະນະທໍາເດັກ, ສະຖານທີ່ບັນເທີງ, ສວນສາທາລະນະ ພ້ອມທັງຊີ້ນໍາການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ. ໂຄສະນາເຜີຍແຜ່ປຸກລະດົມຂະບວນການສ້າງແບບແຜນດໍາລົງຊີວິດວັດທະນະທໍາ, ຮີດຄອງປະເພນີ, ການເຮັດບຸນສິນກິນທານ ແລະ ງານພິທີກໍາທາງດ້ານວັດທະນະທໍາຂອງເຜົ່າຕ່າງໆ ແລະ ຂອງຊາດ;

17. ຕິດຕາມ, ກວດກາ ແລະ ຈໍາກັດການເຄື່ອນໄຫວທີ່ຝືນທາງດ້ານວັດທະນະທໍາ ແລະ ຂັດກັບແນວທາງຂອງພັກ, ກົດໝາຍ, ລະບຽບຂອງລັດ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ;

18. ສໍາຫຼວດ, ຂຶ້ນທະບຽນວັດຖຸບູຮານ, ບູຮານສະຖານ, ຮ່ອງຮອຍປະຫວັດສາດ, ປູສະນີຍະສະຖານ, ສະຖານທີ່ປະຫວັດສາດ, ທໍາມະຊາດ, ວັດທະນະທໍາ ເພື່ອວິໄຈ, ອະນຸລັກຮັກສາ, ປະຕິສັງຂອນມໍລະດົກທີ່ເປັນຮູບປະທໍາ ແລະ ນາມມະທໍາຂອງຊາດ, ຂອງທ້ອງຖິ່ນ ແລະ ເພື່ອນໍາສະເໜີຕໍ່ອົງການສຶກສາ, ວິທະຍາສາດ ແລະ ວັດທະນະທໍາ ຂອງອົງການສະຫະປະຊາຊາດ (ອຸຍແນັດສະໂກ) ພິຈາລະນາຮັບຮອງເອົາມໍລະດົກວັດທະນະທໍາທີ່ພົ້ນເດັ່ນຂອງລາວ ເຂົ້າເປັນມໍລະດົກໂລກ;

19. ກໍານົດມາດຕະຖານ, ລະບຽບການ ແລະ ອະນຸມັດການຂຸດຄົ້ນມໍລະດົກວັດທະນະທໍາ ທີ່ເປັນຮູບປະທໍາ ແລະ ນາມມະທໍາ, ນໍາເຂົ້າ-ສົ່ງອອກວັດຖຸບູຮານ ໃຫ້ຖືກຕ້ອງຕາມກົດໝາຍ;

20. ກໍານົດມາດຕະຖານ, ລະບຽບການໃນການສ້າງຕັ້ງ, ການຄຸ້ມຄອງການບໍລິການຂອງຫໍພິພິທະພັນ, ຫໍວັດທະນະທໍາ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍສະໝຸດ, ຫ້ອງສະໝຸດ, ຫ້ອງອ່ານໜັງສືລະດັບຊາດ, ລະດັບຂະແໜງການ ແລະ ລະດັບທ້ອງຖິ່ນ;

21. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານດ້ານການພິມ, ພິມຈໍາໜ່າຍ, ຈໍາໜ່າຍສິ່ງພິມ, ການປະດິດຄິດແຕ່ງວັນນະຄະດີ, ວັນນະກໍາ; ແນະນໍາ ແລະ ສ້າງຈິດສໍານຶກໃນທົ່ວສັງຄົມ ໃຫ້ເຂົ້າໃຈໃນການຄຸ້ມຄອງ, ນໍາ

ໃຊ້ທ່າແຮງ, ການອະນຸລັກຮັກສາ ແລະ ສົ່ງເສີມຄຸນຄ່າມໍລະດົກຂອງຊາດ; ຄຸ້ມຄອງ, ສົ່ງເສີມນັກປະດິດຄິດແຕ່ງບົດວັນນະຄະດີ ແລະ ວັນນະກຳພ້ອມທັງຕິດຕາມ, ປັບປຸງ, ກວດແກ້ບົດວັນນະຄະດີ ແລະ ວັນນະກຳ;

22. ຄຸ້ມຄອງ, ສົ່ງເສີມການຜະລິດຮູບເງົາເລື່ອງ, ຮູບເງົາເອກະສານ ທີ່ສ່ອງແສງເຖິງເຫດການສຳຄັນທາງດ້ານການເມືອງ, ເສດຖະກິດ-ສັງຄົມ-ວັດທະນະທຳ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສຳເນົາໄວ້ເປັນຄັງສາງຂອງຊາດ;

23. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານວິຈິດສິນ ແລະ ສິລະປະຫັດຖະກຳທັງອາຊີບ ແລະ ມອນຊົນພ້ອມທັງກຳນົດການສ້າງຕັ້ງອະນຸສາວະລີທີ່ລະນຶກ, ການປະດັບປະດາ, ວາງສະແດງລະດັບຊາດ ແລະ ລະດັບສາກົນ.

24. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ, ເກັບກຳ, ກອບກູ້ ແລະ ປະກອບຄຳເຫັນທາງດ້ານວິຊາການຕໍ່ການບຳລຸງຮັກສາ, ບູລະນະ, ປະຕິສັງຂອນ, ການປຸກສ້າງ ແລະ ກິດຈະກຳຕ່າງໆທີ່ມີຜົນກະທົບຕໍ່ມໍລະດົກຂອງທ້ອງຖິ່ນ ແລະ ຂອງຊາດ;

25. ໂຄສະນາ, ສົ່ງເສີມ ແລະ ພັດທະນາການທ່ອງທ່ຽວໃຫ້ຍືນຍົງ ແລະ ເຂັ້ມແຂງ, ໂຄສະນາແຫຼ່ງທ່ອງທ່ຽວ, ທຸລະກິດທ່ອງທ່ຽວ, ສົ່ງເສີມການທ່ອງທ່ຽວພາຍໃນ ແລະ ດຶງດູດນັກທ່ອງທ່ຽວຊາວຕ່າງປະເທດ ເຂົ້າມາທ່ອງທ່ຽວປະເທດລາວ ພ້ອມທັງປູກຈິດສຳນຶກກ່ຽວກັບຄວາມຮູ້ພື້ນຖານທີ່ດີຂອງຄົນລາວ ແລະ ຂອງຊາດລາວ;

26. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອກຳນົດການວາງແຜນພັດທະນາ ແລະ ຈັດສັນ, ບູລະນະແຫຼ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃນຂອບເຂດທົ່ວປະເທດ;

27. ຄຸ້ມຄອງ, ຕິດຕາມ, ກວດກາ, ກຳນົດມາດຕະຖານ ແລະ ຈັດລະດັບຂັ້ນ ຫຼື ປະເພດຂອງທຸລະກິດນຳທ່ຽວ, ໂຮງແຮມ, ເຮືອນພັກ, ລີສອດ, ຮ້ານອາຫານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບທີ່ໄດ້ກຳນົດໄວ້;

28. ສ້າງ, ຈັດຕັ້ງ ຫລື ເຂົ້າຮ່ວມກິດຈະກຳທ່ອງທ່ຽວຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ; ປັບປຸງບູລະນະສູນ-ຫ້ອງຂໍ້ມູນຂ່າວສານ, ເວັບໄຊດ໌ການທ່ອງທ່ຽວໃຫ້ທັນສະໄໝ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແນໃສ່ເພີ່ມທະວີການໂຄສະນາ ແລະ ປຸກລະດົມຂົນຂວາຍການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ຢ່າງແຂງແຮງ ແລະ ກວ້າງຂວາງ;

29. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການອຳນວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ໃນການເດີນທາງເຂົ້າ-ອອກ, ອອກ-ເຂົ້າ ແລະ ເດີນທາງທ່ອງທ່ຽວໃນ ສປປ ລາວ;

30. ຄົ້ນຄວ້າ, ນຳສະເໜີລັດຖະບານ ພິຈາລະນາອະນຸມັດສ້າງຕັ້ງສຳນັກງານຜູ້ຕາງໜ້າກ່ຽວກັບວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຢູ່ຕ່າງປະເທດ;

31. ຄຸ້ມຄອງການເຄື່ອນໄຫວຂອງບັນດາສະພາ, ສະມາຄົມວິຊາຊີບ ແລະ ນິຕິບຸກຄົນ ທີ່ດຳເນີນທຸລະກິດ ຫຼື ທຸລະກຳດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການວາງອອກ; ຊີ້ນຳສະພາສົ່ງເສີມການທ່ອງທ່ຽວແຫ່ງຊາດ ເພື່ອພັດທະນາອຸດສາຫະກຳການທ່ອງທ່ຽວໃຫ້ເຂັ້ມແຂງ ແລະ ຍືນຍົງ;

32. ສ້າງ, ປັບປຸງ ແລະ ຍົກລະດັບໂຄງການຫຼັກສູດການຮຽນ-ການສອນ ວິຊາການສື່ມວນຊົນ, ສິລະປະ, ວັດທະນະທຳ ແລະ ການທ່ອງທ່ຽວ ເພື່ອກໍ່ສ້າງບຳລຸງບຸກຄະລາກອນ ສະໜອງໃຫ້ຂະແໜງການ ແລະ ສັງຄົມ;

33. ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ຄຸ້ມຄອງ, ກຳນົດຕຳແໜ່ງງານ, ສ້າງແຜນການບຳລຸງ, ກໍ່ສ້າງ, ສັບຊ້ອນພະນັກງານ-ລັດຖະກອນ ລວມທັງສົ່ງເສີມບົດບາດຍິງ-ຊາຍ, ການປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນຂອງກະຊວງ

ຖະແຫຼງຂ່າວ, ວັດຖະນະທຳ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມລະບຽບທີ່ກຳນົດ;

34. ຕິດຕາມການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງຂອງຂະແໜງການຕົນແຕ່ສູນກາງລົງຮອດທ້ອງຖິ່ນ ເພື່ອສະກັດກັ້ນປາກົດການລະເມີດກົດໝາຍ ແລະ ລະບຽບການຂອງລັດວາງອອກ; ຄຸ້ມຄອງ, ຊຸກຍູ້, ຊີ້ນຳ, ກວດກາ-ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ, ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ລວມທັງນິຕິກຳ ທີ່ລັດຖະບານ ແລະ ກະຊວງຖະແຫຼງຂ່າວ, ວັດຖະນະທຳ ແລະ ທ່ອງທ່ຽວວາງອອກໃນແຕ່ລະໄລຍະ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາ, ພິຈາລະນາແກ້ໄຂຄຳຮ້ອງຟ້ອງ-ຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕໍ່ການຈັດຕັ້ງ ແລະ ບຸກຄົນ ທີ່ລະເມີດລະບຽບກົດໝາຍ ໃນຂົງເຂດວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

35. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ທາງດ້ານວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມກົດໝາຍ ແລະ ລະບຽບກຳນົດ;

36. ຄຸ້ມຄອງບໍລິຫານການເງິນ, ຊັບສິນ ແລະ ເອກະສານຂອງກະຊວງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມການເຄື່ອນໄຫວວຽກງານບັນດາກົງຈັກຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນແຕ່ລະໄລຍະ; ຄຸ້ມຄອງ, ນຳໃຊ້ກອງທຶນສົ່ງເສີມວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

37. ປະຕິບັດໜ້າທີ່ອື່ນຕາມກົດໝາຍ, ລະບຽບການກຳນົດ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ດັ່ງນີ້ :

1. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ລັດຖະບານ, ກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນໃນທົ່ວຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ;
2. ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາໃຫ້ອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງຢ່າງລະອຽດ;
3. ກ່າວເຕືອນ, ປັບໃໝ, ສັ່ງໂຈະ ແລະ ຍຸບເລີກການດຳເນີນທຸລະກິດດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ເມື່ອເຫັນວ່າມີການລະເມີດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້;
4. ແນະນຳ ແລະ ກຳນົດໝາຍເຕັກນິກ ເພື່ອຄຸ້ມຄອງມະຫາພາກທາງດ້ານວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
6. ປະຕິບັດນະໂຍບາຍຍ້ອງຍໍສັນລະເສີນ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ, ຕໍ່ການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ທັງພາກລັດ ແລະ ເອກະຊົນ ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
7. ຮຽກປະຊຸມສະຫຼຸບຖອດຖອນບົດຮຽນ, ກອງປະຊຸມສຳມະນາວິທະຍາສາດ-ວິຊາການ ດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນລະດັບສູນກາງ ແລະ ທ້ອງຖິ່ນ; ເຂົ້າຮ່ວມກອງປະຊຸມ ແລະ ປະກອບ

ຄຳເຫັນຕໍ່ກອງປະຊຸມຂອງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ ທີ່ພົວພັນເຖິງຄວາມຮັບຜິດຊອບຂອງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

8. ພົວພັນ, ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງສາກົນຕ່າງໆ ແລະ ທ້ອງຖິ່ນ ເພື່ອເກັບກຳສະພາບ, ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ການປະຕິບັດວຽກງານ ໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
9. ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
10. ສະເໜີແຜນງົບປະມານ, ສ້າງແຜນລາຍຮັບ-ລາຍຈ່າຍ ແລະ ດັດແກ້ງົບປະມານຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
11. ຄຸ້ມຄອງ ແລະ ກວດກາການນຳໃຊ້ງົບປະມານ, ພາຫະນະ, ຊັບສິນ-ຊັບສົມບັດຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ໄປຕາມກົດໝາຍ ແລະ ລະບຽບການກຳນົດ;
12. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ.

## ໝວດທີ 3

## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບມີ :

1. ຫ້ອງການ;
2. ກົມຈັດຕັ້ງ-ພະນັກງານ;
3. ກົມກວດກາ;
4. ກົມນິຕິກຳ;
5. ກົມແຜນການ-ການເງິນ;
6. ກົມຮ່ວມມືສາກົນ;
7. ກົມສື່ມວນຊົນ;
8. ກົມສິລະປະການສະແດງ;
9. ກົມວັດທະນະທຳມະຫາຊົນ;
10. ກົມພິມຈຳໜ່າຍ;
11. ກົມມໍລະດົກ;
12. ກົມຮູບເງົາ;
13. ກົມວິຈິດສິນ;
14. ກົມພັດທະນາການທ່ອງທ່ຽວ;
15. ກົມໂຄສະນາການທ່ອງທ່ຽວ;
16. ກົມຄຸ້ມຄອງການທ່ອງທ່ຽວ;

17. ວິທະຍຸກະຈາຍສຽງແຫ່ງຊາດລາວ;
18. ໂທລະພາບແຫ່ງຊາດລາວ;
19. ສຳນັກຂ່າວສານປະເທດລາວ;
20. ໜັງສືພິມປະຊາຊົນ;
21. ໜັງສືພິມພາສາຕ່າງປະເທດ;
22. ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ;
23. ສະຖາບັນວິຈິດສິນແຫ່ງຊາດ.

ຫົວໜ່ວຍວິຊາການລະດັບສອງຂຶ້ນກັບກະຊວງ ປະກອບມີ:

1. ກອງສິລະປະກອນແຫ່ງຊາດ;
2. ກອງກາຍຍະສິນແຫ່ງຊາດ;
3. ກອງລະຄອນລຳແຫ່ງຊາດ;
4. ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ;
5. ຫໍສະໝຸດແຫ່ງຊາດ;
6. ໂຮງຮຽນສິລະປະແຫ່ງຊາດ;
7. ຫໍພິພິທະພັນແຫ່ງຊາດ;
8. ກອງລະຄອນຕຸກກະຕາແຫ່ງຊາດ;
9. ກອງລະຄອນເວົ້າແຫ່ງຊາດ;
10. ວາລະສານວັນນະສິນ;
11. ຫໍວັດທະນະທຳແຫ່ງຊາດ;
12. ສູນວັດທະນະທຳເດັກ;
13. ກອງບູຮານວິທະຍາ;
14. ຫ້ອງການມໍລະດົກໂລກຫຼວງພະບາງ;
15. ຫ້ອງການມໍລະດົກໂລກວັດພູຈຳປາສັກ;
16. ວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ.

ກົງຈັກການຈັດຕັ້ງຂອງທ້ອງຖິ່ນຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບມີ:

1. ຂັ້ນແຂວງ ມີພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ຂັ້ນເມືອງ ມີຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ການສ້າງຕັ້ງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນແຂວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນເມືອງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບມີ:

ກ. ຂັ້ນກະຊວງ

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ໃນການຄຸ້ມຄອງມະຫາພາກຕາມຂະແໜງການຕົນ ຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

   ໃນເວລາຕິດຂັດລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີທ່ານໜຶ່ງເປັນຜູ້ຮັກສາການແທນ.
2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີກະຊວງເປັນຜູ້ຮັກສາການແທນໃນເວລາລັດຖະມົນຕີກະຊວງຕິດຂັດ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງຕາມການກຳນົດຕຳແໜ່ງງານ.

**ຂ. ຂັ້ນແຂວງ ແລະ ຂັ້ນເມືອງ**

1. ຂັ້ນແຂວງ ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ;
2. ຂັ້ນເມືອງ ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4

### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸລະດັບ;
3. ທຸກການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ

ແນໃສ່ໜູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມ ແລະ ສ່ອງແສງປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສະຖາບັນ, ກອງວິຊາການ, ບັນດາຫົວໜ່ວຍກິຈັກວິຊາການທີ່ຂຶ້ນກັບກະຊວງ ແລະ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນເມືອງຕາມທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ບັນດາການຈັດຕັ້ງທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 396/ນຍ, ລົງວັນທີ 02 ພະຈິກ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ